

# ຄວາມຫຼົງໄຫຼຂອງໄວໜຸ່ມຕ່າງປະເທດ ຕໍ່ກັບຢາສະໝຸນໄພຢຸນນານ

ແຂວງຢຸນນານມີຊັບພະຍາກອນຢາສະໝຸນໄພຈີນທີ່ອຸດົມສົມບູນ, ຖືກເອີ້ນວ່າເປັນ "ຄັງຢາສະໝຸນໄພ" ຂອງຈີນ ຊຶ່ງຈຳນວນປະເພດຢາສະໝຸນໄພທີ່ຖືກຄົ້ນພົບຢູ່ແຂວງຢຸນນານ ຖືກຈັດຢູ່ອັນດັບໜຶ່ງຂອງຈີນ. ປັດຈຸບັນ, ເມື່ອເວົ້າເຖິງ "ຢາສະໝຸນໄພຢຸນນານ" ໃຜໆກໍຮູ້ແລ້ວວ່າ ມັນເປັນຢາສະໝຸນໄພຈີນທີ່ຜະລິດຢູ່ແຂວງຢຸນນານ, ອຸດສາຫະກຳຢາສະໝຸນໄພຢຸນນານ ກໍແມ່ນໜຶ່ງໃນອຸດສາຫະກຳເສົາຄ້ຳຂອງແຂວງຢຸນນານ. ໃນສະບັບນີ້, ພວກເຮົາມາຮັບຮູ້ເລື່ອງລາວກ່ຽວກັບນັກສຶກສາຕ່າງປະເທດ ທີ່ຮຽນຢູ່ແຂວງຢຸນນານ ທີ່ມີສາຍເນນ ຫຼື ຄວາມຫຼົງໄຫຼ ກັບ "ຢາສະໝຸນໄພຢຸນນານ" ແລະ ແພດແຜນຢາຈີນ.

## "ຢາສະໝຸນໄພຢຸນນານ ເຮັດໃຫ້ຊີວິດຂອງຂ້ອຍມີສີສັນຫຼາຍກວ່າເກົ່າ"



ນາງ ເມິງທິງລີ ເປັນຄົນລາວ ແຕ່ພໍ່ຂອງນາງເປັນຄົນຈີນ ແລະ ເປັນທ່ານໝໍແພດແຜນຢາຈີນ. ຕອນຍັງນ້ອຍ, ທຸກຄັ້ງທີ່ພໍ່ຂອງນາງເອົາຢາສະໝຸນໄພໄປຕາກແຫ້ງ ກໍຈະສອນວິທີຈຳແນກວັດຖຸດິບ ຂອງຢາສະໝຸນໄພແຕ່ລະຊະນິດໃຫ້ນາງ, ພ້ອມທັງສອນວິທີຈື່ຊື່ຂອງຢາສະໝຸນໄພ ໂດຍຜ່ານບົດກະວີໃຫ້ນາງ, ເຊັ່ນ "ເຖິງຈະຫັກແລ້ວກໍຕາມ, ແຕ່ສາຍໃຍທິວບົວຍັງບໍ່ຂາດ, ຢາທີ່ບັນເທົາລະບາຍຄວາມອຸກອັ່ງໃຈຕ້ອງແມ່ນຕົ້ນຕັ່ງກ່ວຍ"... ສຳລັບຄຳກາບກອນຈີນບູຮານເຫຼົ່ານີ້, ນາງສາມາດເລົ່າໄດ້ ຕັ້ງແຕ່ນ້ອຍ. ໃນໃຈຂອງນາງ, ຢາສະໝຸນໄພຈີນ ບໍ່ພຽງແຕ່ເປັນຢາສະໝຸນໄພເທົ່ານັ້ນ, ຫາກຍັງເປັນສິ່ງມີຊີວິດທີ່ສວຍງາມ.

ສຳລັບ ນາງ ເມິງທິງລີ ແລ້ວ, ໃນບັນດາຢາສະໝຸນໄພຈີນນັ້ນ ຕັ່ງກ່ວຍ (Dang gui, Angelica sinensis) ເຮັດໃຫ້ນາງມີຄວາມປະທັບໃຈຫຼາຍທີ່ສຸດ. ພາຍຫຼັງມາສຶກສາຮ່ຳຮຽນແພດແຜນຢາຈີນຢູ່ແຂວງຢຸນນານແລ້ວ, ນາງໄດ້ຮຽນຮູ້ວ່າຕັ່ງກ່ວຍ ມີປະຫວັດອັນຍາວນານ ແລະ ມີຜົນດີຕໍ່ການກັນເລືອດອອກ, ປັບຮໍໂມນເພື່ອປັບໃຫ້ປະຈຳເດືອນມາປົກກະຕິ ແລະ ບັນເທົາຄວາມເຈັບປວດ. ຕັ່ງກ່ວຍ ມີຖິ່ນກຳເນີດຢູ່ພາກຕາເວັນຕົກສ່ຽງເໜືອຂອງຈີນ ແລະ ໄດ້ນຳມາປູກຢູ່ແຂວງຢຸນນານເປັນເວລາຫຼາຍກວ່າ 200 ປີແລ້ວ, ປັດຈຸບັນ, ຜົນຜະລິດຕັ່ງກ່ວຍດິບຕໍ່ມູ້ (ຫົວໜ່ວຍວັດແທກຂອງຈີນ, 1 ມູ້ມີປະມານ 667 ຕາແມັດ) ສູງສຸດມີປະມານ 1.000 - 1.200 ກິໂລ.

ຢູ່ຖານປູກຕັ່ງກ່ວຍ ແຫ່ງໜຶ່ງຂອງເມືອງດົງຊວນ (Dong chuan) ແຂວງຢຸນນານ, ນາງ ເມິງທິງລີ ໄດ້ເຫັນເນື້ອທີ່ການປູກຕັ່ງກ່ວຍ ຢ່າງກວ້າງຂວາງ. ນາງກ່າວວ່າ ຕັ່ງກ່ວຍ ເປັນຢາສະໝຸນໄພທີ່ດີ ສຳລັບການບຳລຸງຮ່າງກາຍ, ຫຼັງຈາກໄດ້ຕາກແຫ້ງ ແລະ ປຸງແຕ່ງແລ້ວ, ກຳມັນຕະພາບ (Active ingredient) ຂອງຕັ່ງກ່ວຍ ຖືກກະຕຸ້ນອອກເປັນຢ່າງດີ ແລະ ສາມາດບຳລຸງເລືອດໄດ້ດີກວ່າເກົ່າ.

ນາງ ເມິງທິງລີ ກ່າວວ່າ: ໃນບັນດາວັດທະນະທຳພື້ນເມືອງຂອງຈີນ, ສິ່ງທີ່ດຶງດູດຂ້ອຍຫຼາຍທີ່ສຸດກໍແມ່ນແພດແຜນຢາຈີນ ແລະ ບົດກະວີຂອງຈີນ, ກາບກອນທີ່ກ່ຽວກັບຢາສະໝຸນໄພ ມີມົນສະເໜ່ຫຼາຍທີ່ສຸດເລີຍ. ກໍແມ່ນມົນສະເໜ່ທີ່ເລິກລັບ ແລະ ເລິກເຊິ່ງດັ່ງກ່າວ, ໄດ້ດຶງດູດ ນາງ ເມິງທິງລີ ເດີນທາງມາຮອດແຂວງຢຸນນານ ເພື່ອສຶກສາຮ່ຳຮຽນແພດແຜນຢາຈີນ ທີ່ຕົນມັກ, ສິ່ງເຫຼົ່ານີ້ເຮັດໃຫ້ຊີວິດຂອງນາງມີຄວາມອຸດົມສົມບູນ ແລະ ມີສີສັນຫຼາຍຍິ່ງຂຶ້ນ.

## ເສັ້ນທາງການຮຽນແພດແຜນຢາຈີນຂອງນ້ອງຊາຍ "ຫອມລາບ"



ທ້າວ ລູເວີນຮ້າວ ມາຈາກແຂວງດຽນບຽນ ປະເທດຫວຽດນາມ, ລາວມີຄວາມສົນໃຈຕໍ່ວັດທະນະທຳຈີນ ແລະ ມັກແພດແຜນຢາຈີນເປັນຢ່າງຍິ່ງ, ພາຍຫຼັງຮຽນຈົບຈາກມັດທະຍົມປາຍແລ້ວ, ລາວກໍໄດ້ເດີນທາງມາຮຽນສົມີຝັງເຂັມ ແລະ ນວດ ຢູ່ມະຫາວິທະຍາໄລແພດແຜນຢາພື້ນເມືອງຈີນຢຸນນານ (Yunnan University of Chinese Medicine).

ທ້າວລູເວີນຮ້າວ ໄດ້ດຳລົງຊີວິດຢູ່ຈີນ ແລະ ຫ່າງໄກຈາກບ້ານເກີດເມືອງນອນຂອງຕົນ, ລາວໄດ້ເອົາແຜ່ນຕິດແກ້ອັກເສບກາເສືອຂາວ ຕິດໂຕສະເໝີ (ເປັນໜຶ່ງໃນ 3 ສົມບັດທີ່ດີຂອງຫວຽດນາມ, ສາມາດປິ່ນປົວອາການເຈັບຫຼັງປວດແອວ, ອັກເສບເອັນ ຍ້ອນລົ້ມ, ກ້າມຊີ້ນເມື່ອຍ ແລະ ເຈັບເສັ້ນເຈັບເອັນ). ລາວກ່າວວ່າ: ຢາຊະນິດນີ້ໃຊ້ໃນເວລາເຈັບປວດ, ເອົາມັນມາທາໃສ່ບ່ອນເຈັບ ແລະ ນວດໄປພ້ອມ."

ທ້າວລູເວີນຮ້າວ ກ່າວວ່າ: "ກ່ອນໜ້ານີ້ ຂ້ອຍບໍ່ຄ່ອຍສົນໃຈຕໍ່ກັບສ່ວນປະກອບຂອງແຜ່ນຕິດແກ້ອັກເສບກາເສືອຂາວປານໃດ, ພຽງແຕ່ຮູ້ວ່າກິ່ນຂອງມັນສົດຊື່ນ, ຄືກັນກັບຜັກຫອມລາບທີ່ຂ້ອຍເຄີຍກິນ. ຫຼັງຈາກຮຽນຮູ້ດ້ານແພດແຜນຢາຈີນແລ້ວ, ຂ້ອຍໄດ້ຮູ້ວ່າ ຫອມລາບສາມາດກິນເປັນອາຫານ ແລະ ໃຊ້ເປັນຢາ ໄດ້ທັງສອງ. ຢູ່ໃນແຜ່ນຕິດແກ້ອັກເສບກາເສືອຂາວ ມີໃບມິ້ນ (ສານກັ່ນຕອງຈາກໃບຫອມລາບ) ແລະ ນ້ຳມັນຫອມລາບ. ເມື່ອຕອນຍັງນ້ອຍ, ຂ້ອຍພຽງແຕ່ຮູ້ວ່າຫອມລາບສາມາດກິນໄດ້ເທົ່ານັ້ນ, ແຕ່ໃນປັດຈຸບັນ ຂ້ອຍຍັງຮູ້ວ່າມັນສາມາດເອົາມາໃຊ້ເປັນຢາໄດ້, ຂ້ອຍຄິດວ່ານີ້ແມ່ນສາຍເນນ ລະຫວ່າງ ຂ້ອຍ ກັບ ຈີນ ແລະ ແພດແຜນຢາຈີນ.

ເມື່ອເວົ້າເຖິງແຜນການໃນອະນາຄົດຂອງຕົນ, ທ້າວ ລູເວີນຮ້າວ ກ່າວວ່າ, ຈະນຳເຕັກນິກຝັງເຂັມ ແລະ ນວດ ທີ່ລາວຮຽນຢູ່ຈີນ ກັບເມືອບ້ານເກີດເມືອງນອນຂອງຕົນ ພ້ອມທັງປະສານສົມທົບກັບຢາສະໝຸນໄພຂອງທ້ອງຖິ່ນ ເພື່ອເຜີຍແຜ່ວັດທະນະທຳຈີນ. ລາວກ່າວຕື່ມວ່າ: ຕ້ອງຮູ້ບຸນຄຸນຕໍ່ທຸກສິ່ງທຸກຢ່າງໃນຊີວິດເຮົາ, ໂດຍຜ່ານແພດແຜນຢາຈີນ ຂ້ອຍສາມາດປົວພະຍາດໃຫ້ຄົນອື່ນ ແລະ ລ້ຽງຊີບຕົນໄດ້ອີກ, ນີ້ກໍຄືສິ່ງທີ່ມີບຸນວາດສະໜາແທ້ໆແມ່ນບໍ?"

## ໄລ່ຫາກິ່ນຫອມຂອງກົກໝາດ



ທ້າວ ຈູຮວງລິນ, ອາຍຸ 26 ປີ, ມາຈາກອິນໂດເນເຊຍ, ຫຼັງຈາກຮຽນແພດແຜນຢາຫຼວງເປັນເວລາ 5 ປີ, ດ້ວຍຄວາມສົນໃຈ ຕໍ່ວັດທະນະທຳແພດແຜນຢາຈີນຢ່າງສູງ, ລາວໄດ້ເດີນທາງໄກແສນໄກແລ້ວ ມາຮອດມະຫາວິທະຍາໄລແພດແຜນຢາພື້ນເມືອງຈີນຢຸນນານ, ເພື່ອຄົ້ນຄວ້າຄວາມເລິກລັບຂອງແພດແຜນຢາຈີນ.

ມີຫຼາຍຄົນບໍ່ເຂົ້າໃຈ, ເລີຍຖາມ ທ້າວ ຈູຮວງລິນ ວ່າ "ຮຽນແພດແຜນຢາຫຼວງໄດ້ 5 ປີແລ້ວ, ເປັນຫຍັງເຈົ້າຈຶ່ງກັບມາຮຽນແພດແຜນຢາຈີນອີກ?" ທ້າວຈູຮວງລິນ ຕອບດ້ວຍໃບໜ້າທີ່ຍິ້ມແຍ້ມແຈ່ມໃສວ່າ: ພໍ່ຕູ້ ແລະ ນ້າບ່າວຂອງຕົນລ້ວນແຕ່ເປັນທ່ານໝໍແພດແຜນຢາຈີນອາວຸໂສ, ຕັ້ງແຕ່ຂ້ອຍຍັງເປັນໄວເດັກ, ຂ້ອຍກໍມີຄວາມສົນໃຈຕໍ່ແພດແຜນຢາຈີນຫຼາຍ, ຄົນໃນຄອບຄົວກໍສະໜັບສະໜູນຂ້ອຍຫຼາຍ, ສະນັ້ນຂ້ອຍຈຶ່ງໄດ້ມາຮຽນແພດແຜນຢາຈີນຢູ່ມະຫາວິທະຍາໄລແພດແຜນຢາພື້ນເມືອງຈີນຢຸນນານ.

ໃນເວລາຮຽນຢູ່ຈີນ, ທ້າວຈູຮວງລິນ ໄດ້ພົບເຫັນວ່າ ທິດສະດີ "ທຸກສິ່ງທຸກຢ່າງສາມາດໃຊ້ເປັນຢາໄດ້" ຂອງແພດແຜນຢາຈີນ ເປັນສິ່ງທີ່ໜ້າປະທັບໃຈຫຼາຍ, ຕົວຢ່າງວ່າ ໃບໝາດ (Aicao, Wormwood) ສາມາດໃຊ້ເປັນຢາໄດ້, ທັງເປັນອາຫານໄດ້, ຍັງສາມາດໃຊ້ໃນເວລາຝັງເຂັມໄດ້ອີກ. ທ້າວ ຈູຮວງລິນ ກ່າວວ່າ: ຕາມການບັນທຶກໃນປຶ້ມ "Compendium of Materia Medica" ຂອງຈີນ, ໃບໝາດ ສາມາດບຳລຸງຮ່າງກາຍ, ຂັບໄລ່ຄວາມຊຸ່ມ ແລະ ຄວາມເຢັນໃນຮ່າງກາຍ, ການຄາຍເສັ້ນເລືອດລົມ, ການກັນເລືອດອອກ ແລະ ຮັກສາບໍ່ໃຫ້ຫຼຸລູກ. ສະນັ້ນ ໃບໝາດຖືກເຮັດເປັນກ້ານ ເພື່ອໃຊ້ສຳລັບການຝັງເຂັມ, ດັ່ງນັ້ນມັນຖືກເອີ້ນວ່າເປັນ "ຢາສະໝຸນໄພທີ່ດີ".

ໃບໝາດໄດ້ສ້າງສິ່ງຈູງໃຈຄວາມຮັກຫອມຕໍ່ແພດແຜນຢາຈີນຂອງ ທ້າວ ຈູຮວງລິນ. ລາວ ກ່າວວ່າ: ຂ້ອຍຢາກນຳເອົາຄວາມຮູ້ດ້ານແພດແຜນຢາຈີນທີ່ຮຽນຢູ່ຈີນ ກັບເມືອອິນໂດເນເຊຍ, ເພື່ອສືບທອດໃຈແພດແຜນຢາຈີນຂອງຄອບຄົວຕົນ, ເຮັດໃຫ້ຄົນທັງຫຼາຍເຂົ້າໃຈ ແລະ ເຫັນດີນຳແພດແຜນຢາຈີນນັບມື້ນັບຫຼາຍຂຶ້ນ."

ແຫຼ່ງຂ່າວ: ບັນຊີວີແຊັດທາງການ "ວິທະຍາໄລແພດແຜນຢາພື້ນເມືອງຈີນ ຢຸນນານ" ແລະ ອື່ນໆ



ເນື້ອໃນເພີ່ມເຕີມ: ໃນປີ 2023, ເນື້ອທີ່ປູກຝັງ, ປະລິມານການຜະລິດ ແລະ ມູນຄ່າການຜະລິດດ້ານກະສິກຳຂອງຢາສະໝຸນໄພຈີນຂອງແຂວງຢຸນນານ ເປັນອັນດັບໜຶ່ງຂອງຈີນ ເປັນເວລາ 5 ປີຕິດຕໍ່ກັນ. ຍອດມູນຄ່າການຜະລິດດ້ານກະສິກຳ ຂອງຢາສະໝຸນໄພຈີນທີ່ມີຊື່ສຽງ ຈຳນວນ 10 ຢ່າງ ຂອງແຂວງຢຸນນານ ເຊັ່ນ: ໂສມສາມເຈັດ, Chonglou, ໝາກແໜ່ງ, Gastrodia elata ແລະ ຕັ່ງກ່ວຍ ເປັນຕົ້ນ ມີຫຼາຍກວ່າ 1 ຕື້ຢວນ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)



ynzhanba@163.com
laos.yunnangateway.com